UNITED NATIONS
LAO PDR

# ຄວາມຄືບໜ້າໃນການຜັນຂະຫຍາຍຜົນຂອງ ກອງປະຊຸມໂຕະມົນ 2023

ນະຄອນຫຼວງວຽງຈັນ, 03 ກໍລະກົດ 2024

ນໍາສະເໜີໂດຍ: ທ່ານ ນ. ສີສົມບູນ ອຸນາວົງ ຫົວໜ້າກົມຮ່ວມມືສາກົນ
ກະຊວງແຜນການ ແລະການລົງທຶນ

UNITED NATIONS
LAO PDR

# ຫົວຂໍ້ການນຳສະເໜີ

I. ການຜັນຂະຫຍາຍຜົນກອງປະຊຸມໂຕະມົນ 2023

II. ຄວາມຄືບໜ້າໃນການຈັດຕັ້ງປະຕິບັດຜົນກອງປະຊຸມໂຕະມົນ 2023

UNITED NATIONS
LAO PDR

# I. ການຜັນຂະຫຍາຍຜົນກອງປະຊຸມໂຕະມົນ ປະຈຳປີ 2023:

ກຸມພາ | ມີນາ | ເມສາ | ພຶດສະພາ

1. ລາຍງານຜົນກອງປະຊຸມໂຕະມົນ ປະຈຳປີ 2023 ຫາ ຫສນຍ ສະບັບເລກທີ 571/ກຜທ, ລົງວັນທີ 6 ມີນາ 2024

2. ນຳພາຄູ່ຮ່ວມພັດທະນາ ຢ້ຽມ ຂໍ່ານັບ ພະນະທ່ານ ນາຍົກ ລາຍງານໂດຍສັງ ເຂບຜົນກອງປະຊຸມໂຕະ ມົນ ວັນທີ 26 ເມສາ 2024.

3. ນຳສົ່ງ ຄຳແນະນຳກ່ຽວກັບຂະບວນການໂຕະມົນ ຂອງ ສປປ ລາວ ເດືອນ ເມສາ 2024

4. ປະຊຸມສະຫຼຸບການຈັດຕັ້ງປະຕິບັດວຽກງານຂະ ບວນການໂຕະມົນ 2023 ແລະວາງທິດທາງແຜນການ ປະຈຳປີ 2024

ວັນທີ 13 ພຶດສະພາ 2024

5. ເຜີຍແຜ່ແຈ້ງການສະບັບເລກທີ: 868/ຫສນຍ, ລົງວັນທີ 06 ພຶດສະພາ 2024 ໃນທົ່ວປະເທດ

ເດືອນ ພຶດສະພາ - ມິຖຸນາ 2024

# 1. ການຜັນຂະຫຍາຍຜົນກອງປະຊຸມໂຕະມົນ ປະຈໍາປີ 2023 (ຕໍ່)

ພຶດສະພາ | ມິຖຸນາ | ກໍລະກົດ

6. ຈັດກອງປະຊຸມປະຈໍາໄຕມາດ ຮ່ວມກັບ ບັນດາ ໜ່ວຍງານຂະແໜງ ການເພື່ອປຶກສາຫາລືກັບ ຄູ່ຮ່ວມພັດທະນາ

7. ປະສານສົມທົບກັບພາ ສ່ວນກ່ຽວຂ້ອງ ໂດຍສະເພາະ 10 ໜ່ວຍງານຂະແໜງການ ໃນການຈັດຕັ້ງຜັນຂະຫຍາຍຜົນຂອງ ກອງປະຊຸມໂຕະມົນ ຕາມພາລະບົດບາດຂອງຕົນ

8. ຕິດຕາມຊຸກຍູ້ 10 ໜ່ວຍງານຂະແໜງການ ນໍາສົ່ງບົດລາຍງານການຈັດຕັ້ງປະຕິບັດຜົນຂອງກອງປະຊຸມໂຕະມົນ ໃຫ້ກອງເລຂາຄະນະຊີ້ນໍາລະດັບຊາດ ເພື່ອຂະບວນການໂຕະມົນ

9. ກອງປະທານ ແລະ ປະທານຮ່ວມ ໜ່ວຍງານຂະແໜງການ ເພື່ອປຶກສາຫາລືກັບ ຄູ່ຮ່ວມພັດທະນາ

# II. ຄວາມຄືບໜ້າໃນການຜັນຂະຫຍາຍຜົນກອງປະຊຸມໂຕະມົນ ປະຈໍາປີ 2024

| ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ປະຈໍາປີ 2024 | |
|---|---|
| ❑ ໄດ້ຈັດກອງປະຊຸມປຶກສາຫາລືລະດັບສູງຂອງໜ່ວຍງານເສດຖະກິດມະຫາພາກ;<br>❑ ນໍາສົ່ງ ຮ່າງແຜນພັດທະນາເສດຖະນາເສດຖະກິດ-ສັງຄົມ ແຫ່ງຊາດ 5ປີ ຄັ້ງທີ X, ໃຫ້ແກ່ ປະທານ ແລະປະທານຮ່ວມ ມີຄໍາເຫັນ;<br>❑ ປັບປຸງນະໂຍບາຍການເງິນຢ່າງມີປະສິດທິຜົນ ເພື່ອຮັກສາສະຖຽນລະພາບ ດ້ານເສດຖະກິດມະຫາພາກ, ການເຕີບໂຕແບບຍືນຍົງ ແລະສີຂຽວ;<br>❑ ສ້າງແຜນບູລິມະສິດ ແລະຄວາມໝັ້ນຄົງຂອງເສດຖະກິດມະຫາພາກ ໃນການເຕີບໂຕທີ່ສົມເຫດສົມຜົນ ໃນແຜນພັດທະທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5ປີ ຄັ້ງທີ 9 ແລະ ເພື່ອເປັນພື້ນຖານໃຫ້ແກ່ການສ້າງແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5ປີ ຄັ້ງທີ 10;<br>❑ ຄຸ້ມຄອງເງິນກູ້ຢືມຈາກຕ່າງປະເທດຂອງຫົວໜ່ວຍລົງທຶນພາຍໃນ ແລະ ຕ່າງປະເທດ;<br>❑ ປັບປຸງກົນໄກການຄົ້ນຄວ້າພິຈາລະນາຕໍ່ການສະເໜີປ່ຽນແປງຈຸດປະສົງໃນການດໍາເນີນທຸລະກິດ, ຜູ້ຖືຮຸ້ນ, ທຶນຈົດທະບຽນ ແລະ ອື່ນໆ ຂອງຜູ້ລົງທຶນໃນກິດຈະການບັນຊີຄວບຄຸມ | |
| ການປະຕິບັດຍຸດທະສາດດ້ານການເງິນ | |
| ❑ ດໍາເນີນນະໂຍບາຍເງິນຕາ ໃນທິດທາງທີ່ຮັດກຸມ;<br>❑ ປັບປຸງນະໂຍບາຍເງິນຕາ ໃຫ້ແທດເໝາະກັບສະພາບເສດຖະກິດ ແຕ່ລະໄລຍະ;<br>❑ ຄຸ້ມຄອງສະກັດກັ້ນການຄ້າ ນອກລະບົບ ແລະເພີ່ມທະວີການຈໍາກັດຄວາມຕ້ອງການເງິນຕາ ນອກລະບົບ;<br>❑ ສ້າງ ແລະ ປັບປຸງນິຕິກໍາ ເຊັ່ນ: ນິຕິກໍາຄຸ້ມຄອງບັນຊີເງິນຝາກຂອງບຸກຄົນ-ນິຕິບຸກ, ຄົນລາວຢູ່ຕ່າງປະເທດ ແລະຊຸກຍູ້-ຕິດຕາມ ການຈັດຕັ້ງປະຕິບັດຂໍ້ຕົກລົງເລກທີ 333/ທທລ. | |

UNITED NATIONS
LAO PDR

# 2. ຄວາມຄືບໜ້າໃນການຜັນຂະຫຍາຍຜົນກອງປະຊຸມໂຕະມົນ ປະຈຳປີ 2024 (ຕໍ່)

| ການຟື້ນຟູເສດຖະກິດຂອງ ສປປ ລາວ |
|---|
| ❑ ໄດ້ຈັດກອງປະຊຸມໜ່ວຍງານຂະແໜງການຄ້າ ແລະ ພາກເອກະຊົນ ຄັ້ງທີ 22; |
| ❑ ປັບປຸງ ກົດໝາຍ ວ່າດ້ວຍ ການສົ່ງເສີມການລົງທຶນ ແລະບັນຊີຄວບຄຸມ; |
| ❑ ການຈັດຕັ້ງປະຕິບັດບູລິມະສິດ ພາຍໃຕ້ເສົາຄ້ຳ ເສດຖະກິດ ສຳລັບການເປັນປະທານອາຊຽນຂອງ ສປປ ລາວ; |
| ❑ ປັບປຸງກົນໄກໃນການພິຈາລະນາອະນຸມັດການລົງທຶນ; |
| ❑ ເພີ່ມເງື່ອນໄຂທີ່ເຂັ້ມງວດຂຶ້ນ ກ່ຽວກັບການໂອນສິດນຳໃຊ້ທີ່ດິນ; |
| ❑ ປັບປຸງເນື້ອໃນການຄັດເລືອກຜູ້ລົງທຶນໃນກິດຈະການສຳປະທານ ໃຫ້ມີລັກສະນະແຂ່ງຂັນຫຼາຍຂຶ້ນ; |
| ❑ ເພີ່ມທະວີນະໂຍບາຍດ້ານອາກອນກຳໄລ ສຳລັບຜູ້ພັດທະນາເຂດເສດຖະກິດພິເສດ ແລະເຂດເສດຖະກິດສະເພາະ; |
| ❑ ຮ່ວມເຮັດວຽກກັບບັນດາຂະແໜງການໃນການເຊື່ອມສານວຽກຈຸດສຸມ ເຂົ້າໃນການຈັດຕັ້ງປະຕິບັດວຽກງານແກ້ໄຂຄວາມຫຍຸ້ງຍາກທາງດ້ານ ເສດຖະກິດ-ການເງິນ ທີ່ລະບຸໃນວາລະແຫ່ງຊາດ; |
| ❑ ເຊື່ອມສານໜ້າວຽກການຈັດຕັ້ງປະຕິບັດ ຍຸດທະສາດທາງດ້ານການເງິນ ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ, ຍຸດທະສາດການຂ້າມຜ່ານອອກຈາກສະຖານະພາບປະເທດດ້ອຍພັດທະນາ ຢ່າງໂລ່ງລຽນ; |
| ❑ ສ້າງແຜນປະຕິບັດງານ ຂອງແຕ່ລະຂະແໜງການກ່ຽວຂ້ອງ ໂດຍໄດ້ລະບຸລະອຽດໃນເອກະສານຂອບຟື້ນຟູ ເສດຖະກິດ. |

## 2. ຄວາມຄືບໜ້າໃນການຜັນຂະຫຍາຍຜົນກອງປະຊຸມໂຕະມົນ ປະຈຳປີ 2024 (ຕໍ່)

| ການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ |
|---|
| ❑ ຫັນປ່ຽນໂຄງປະກອບເສດຖະກິດໄປຕາມທິດຄຸນນະພາບ ແລະ ຍົກຄວາມສາມາດ ການຜະລິດພາຍໃນໃຫ້ເຂັ້ມແຂງ;<br>✓ ຍົກສູງປະສິດທິພາບການຜະລິດກະສິກຳໃຫ້ສູງຂຶ້ນ;<br>✓ ພັດທະນາພາກ SME ໃຫ້ເຂັ້ມແຂງ ສາມາດເຊື່ອມໂຍງກັບເຄືອຄ່າຍການຜະລິດສາກົນ ແລະພາກພື້ນ;<br>✓ ປັບປຸງການບໍລິການຂະແໜງການທ່ອງທ່ຽວ ແລະຂະແໜງບໍລິການທີ່ມີມູນຄ່າເພີ່ມສູງ;<br>❑ ຄຸ້ມຄອງສະພາບເສດຖະກິດມະຫາພາກໃຫ້ໝັກແໜ້ນ;<br>❑ ເລັ່ງຂະຫຍາຍຖານລາຍຮັບພາຍໃນ ແລະເພີ່ມທະວີການລົງທຶນ ເຂົ້າວຽກງານພັດທະນາທຶນມະນຸດ;<br>❑ ເລັ່ງປັບປຸງສະພາບແວດລ້ອມ ການດຳເນີນທຸລະກິດໃຫ້ຄ່ອງຕົວ ແລະຫຼຸດຜ່ອນສິ່ງກີດຂວາງດ້ານການລົງທຶນ;<br>❑ ຂະຫຍາຍພື້ນຖານໂຄງລ່າງທີ່ຈຳເປັນຕໍ່ການພັດທະນາ;<br>❑ ຍົກລະດັບການພັດທະນາທັກສະແຮງງານ, ການຄົ້ນຄວ້າ ແລະພັດທະນາ;<br>❑ ປັບປຸງຄວາມອາດສາມາດ, ກົນໄກ ແລະເຄື່ອງມື ເພື່ອຫຼຸດຜ່ອນຜົນກະທົບດ້ານໄພພິບັດ ແລະສິ່ງແວດລ້ອມ. |
| |

UNITED NATIONS
LAO PDR

# 2. ຄວາມຄືບໜ້າໃນການຜັນຂະຫຍາຍຜົນກອງປະຊຸມໂຕະມົນ ປະຈໍາປີ 2024 (ຕໍ່)

### ບົດລາຍງານແຫ່ງຊາດ ແບບສະໝັກໃຈສະບັບທີ 3

- ສືບຕໍ່ກິດຈະກໍາພາຍໃຕ້ໂຄງການ VNR Twinning Programme ການທົບທວນ ບົດລາຍງານແຫ່ງຊາດແບບສະໝັກໃຈ ຊຶ່ງກັນ ແລະ ກັນ;
- ການນໍາສະເໜີ ບົດລາຍງານແຫ່ງຊາດແບບສະໝັກໃຈ ໃນວາລະດຽວກັນ ກັບປະເທດອາແຊັກໄບຈານ;
- ສົ່ງບົດລາຍງານສະບັບສົມບູນ ໃນວັນທີ 14 ມິຖຸນາ 2024;
- ນໍາສະເໜີບົດລາຍງານທີ່ ກອງປະຊຸມເວທີການເມືອງລະດັບສູງອົງການ ສປຊ ໃນເດືອນ ກໍລະກົດ 2024 ທີ່ ນິວຢອກ;
- ເຜີຍແຜ່ບົດລາຍງານໃຫ້ທຸກພາກສ່ວນໄດ້ຮັບຊາບ ແລະ ຈັດຕັ້ງປະຕິບັດ.

### ການຮ່ວມມື ເພື່ອການພັດທະນາທີ່ມີປະສິດທິຜົນ

- ຕິດຕາມ ແລະສັງລວມຄໍາຕອບຂອງແຕ່ຂະແໜງການກ່ຽວຂ້ອງ ໃນການຕອບຄໍາຖາມໃສ່ໃນແບບຟອມການຕິດຕາມການຮ່ວມມືສາກົນGlobal Partnership for Effective Development Cooperation (GPEDC) ຢູ່ ສປປ ລາວ
- ຮັບຮອງເອົາຄໍາຕອບຂອງບັນດາຈຸດປະສານງານຂອງພາກລັດໃນແບບສອບຖາມສໍາລັບການຕິດຕາມປະສິດທິຜົນຂອງການຮ່ວມມືເພື່ອການພັດທະນາ ຢູ່ ສປປ ລາວ, ປະຈຸບັນສໍາເລັດຄໍາຕອບພາການປະເມີນສະພາບແວດລ້ອມທີ່ເອື້ອອໍານວຍຄວາມສະດວກແກ່ການເຄື່ອນໄຫວອົງກາ CSO
- ສືບຕໍ່ຕິດຕາມແບບສອບຖາມພາກການປະເມີນຫຼັກກໍາປາລາ ເພື່ອໃຫ້ສໍາເລັດພາຍໃນອາທິດທໍາອິດຂອງເດືອນກໍລະກົດ ແລະຈັດກອງປະຊຸມເພື່ອຮັບຮອງເອົາຜົນຂອງການປະເມີນດັ່ງກ່າວ

UNITED NATIONS
LAO PDR

# 2. ຄວາມຄືບໃນການຜັນຂະຫຍາຍຜົນກອງປະຊຸມໂຕະມົນ ປະຈໍາປີ 2024 (ຕໍ່)

| ການແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ ສປປ ລາວ |
|---|
| ❑ ຈັດກອງປະຊຸມຄະນະກໍາມະການ ແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ;<br>❑ ຈັດກອງປະຊຸມສະໄໝພິເສດຂອງ ຂະແໜງການແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ ປະຈໍາປີ 2024;<br>❑ ຊຸກຍູ້ການຈັດຕັ້ງປະຕິບັດນະໂຍບາຍ ແລະຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ພ້ອມທັງ ພັດທະນາຊີວິດການເປັນຢູ່ໃຫ້ກັບຄືນສູ່ສັງຄົມ.<br>❑ ບົດບາດຍິງ-ຊາຍ: ໄດ້ແຕ່ງຕັ້ງຈຸດປະສານງານບົດບາດຍິງ-ຊາຍ ໃນບັນດາອົງການ, ໄດ້ເອົາບົດບາດຍິງ-ຊາຍເຂົ້າໃນແຕ່ລະກອງປະຊຸມວິຊາການ, ໄດ້ພັດ ທະນານະໂຍບາຍທາງດ້ານບົດບາດຍິງ-ຊາຍ ສ າລັບຫ້ອງການ ຄຊກລ ແລະ ຄກລ ນອກຈາກນັ້ນ, ຍັງໄດ້ຈັດຝຶກອົບຮົມຄຝຶກທາງດ້ານບົດບາດຍິງ-ຊາຍ;<br>❑ ວຽກຊ່ວຍເຫຼືອຜູ້ຖືກເຄາະຮ້າຍ: ສໍາເລັດການຈັດຕັ້ງປະຕິບັດໂຄງການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຢູ່ ແຂວງຊຽງຂວາງ ແລະຫົວພັນ, ໄດ້ຊ່ວຍເຫຼືອການປິ່ນປົວແກ່ຜູ້ເຄາະຮ້າຍຈາກ ລບຕ, ໄດ້ລົງຕິດຕາມ ແລະ ຊຸກຍູ້ວຽກງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ 4 ຄັ້ງ;<br>❑ ວຽກງານການສໍາຫຼວດ-ກວດກູ້: ສໍາເລັດການທໍາລາຍໂບມໃຫຍ່ 2 ຄັ້ງ ຢູ່ ບ້ານ ສອນມີໄຊ, ເມືອງ ເຊໂປນ, ແຂວງສະຫວັນນະເຂດ ແລະ ເມືອງ ປາກຊ່ອງ ຢູ່ ແຂວງ ຈໍາປາສັກ, ຈັດບູລິມະສິດກ່ຽວກັບໜ້າວຽກງານສໍາຫຼວດ-ກວດກູ້ ໃຫ້ອົງການປົກຄອງທ້ອງຖິ່ນຢູ່ແຂວງ ຜົ້ງສາລີ ແລະການທໍາລາຍສຸກເສີນທັງ ໝົດ 2 ຄັ້ງ;<br>❑ ວຽກງານໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ: ຈັດກອງປະຊຸມສະຫຼຸບການຈັດຕັ້ງປະຕິບັດວຽກງານໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ ຜ່ານລາຍການວິທະຍຸ 10 ແຂວງ. ໄດ້ອອກອາກາດໂຄສະນາຜ່ານວິທະຍຸ 10 ແຂວງ, ໄດ້ຜະລິດສະປອດໂຄສະນາ, ຂຽນຂ່າວ, ໂຄສະນາຜ່ານທາງສື່ອອນລາຍ, ໂຄສະນາຜ່ານລາຍການແຊກຊ້ອນທາງວິທະຍຸ ແລະສໍາເລັດສະປອດໂຄສະນາເປັນພາສາຊົນເຜົ່າ. |

UNITED NATIONS
LAO PDR

# 2. ຄວາມຄືບໃນການຜັນຂະຫຍາຍຜົນກອງປະຊຸມໂຕະມົນ ປະຈໍາປີ 2024 (ຕໍ່)

**ວຽກງານພັດທະນາຊັບພະຍາກອນມະນຸດ ໃນຂະແໜງສຶກສາ**

- ❑ ຈັດກອງປະຊຸມໜ່ວຍງານວິຊາການຂະແໜງການສຶກສາການ ແລະກິລາ;
- ❑ ຈັດກອງປະຊຸມກອງປະຊຸມໜ່ວຍງານວິຊາການຂະແໜງການສຶກສາທິການ ແລະ ກິລາ ລະດັບວິຊາການ;
- ❑ ຈັດຕັ້ງປະຕິບັດນະໂຍບາຍ ແລະມາດຕະການແກ້ໄຂບັນຫາການຂາດແຄນຄູສອນ, ການປະລະການຮຽນ ແລະ ສົ່ງເສີມການເຂົ້າຮຽນວິຊາຊີບ;
- ❑ ປະຕິບັດມະຕິວ່າດ້ວຍລັດຖະກອນຄູ ເພື່ອແນໃສ່ຮັບປະກັນການປະຕິບັດໜ້າທີ່ ໃນການສ້າງຊັບພະຍາກອນມະນຸດ ແລະການພັດທະນາຄູ ສະບັບເລກທີ 202/ລບ, ລົງວັນທີ 12 ພຶດສະພາ 2023 ແລະດໍາລັດວ່າດ້ວຍກອງທຶນພັດທະນາການຝຶກອົບຮົມ, ການສຶກສາ ແລະວິຊາຊີບ ສະບັບເລກທີ194/ລບ, ລົງວັນທີ 19 ເມສາ2023;
- ❑ ຊຸກຍູ້ໃຫ້ຄະນະກໍາມະການແຜນການ ແລະງົບປະມານ (PBC) ແລະຄະນະກໍາມະການຈັດສັນຄູ (TAC) ໃຫ້ມີການປຶກສາຫາລືເປັນປະຈໍາ ແລະລາຍງານໃຫ້ແກ່ ໜ່ວຍງານຂະແໜງການສຶກສາ;
- ❑ ໄດ້ນໍາໃຊ້ຫຼັກສູດການຮຽນ-ການສອນແບບໃໝ່ (DTE) ພ້ອມທັງຈັດຝຶກອົບຮົມຄູ ຢູ່ ຂັ້ນສູນກາງ ແລະທ້ອງຖິ່ນ.

UNITED NATIONS
LAO PDR

# 2. ຄວາມຄືບໃນການຜັນຂະຫຍາຍຜົນກອງປະຊຸມໂຕະມົນ ປະຈຳປີ 2024 (ຕໍ່)

| ວຽກງານສາທາລະນະສຸກ |
|---|
| ❑ ຈັດຕັ້ງປະຕິບັດຍຸດທະສາດພັດທະນາຊັບພະຍາກອນມະນຸດສາທາລະນະສຸກ ຮອດປີ 2030;<br>❑ ຂະຫຍາຍຕາໜ່າງສາທາລະນະສຸກໄປສູ່ເຂດຊົນນະບົດຫ່າງໄກສອກຫຼີກຢ່າງມີຈຸດສຸມ, ບັນຈຸຊັບຊອນພະນັກງານ-ຈັດສັນແຫຼ່ງຊັບພະຍາ ກອນທີ່ຈຳເປັນ;<br>❑ ປັບປຸງການສະໜອງການບໍລິການປິ່ນປົວດ້ວຍກອງທຶນປະກັນສຸຂະພາບ, ປະກັນສັງຄົມ;<br>❑ ສຸມໃສ່ການບັນລຸຄາດໝາຍ 11 ຕົວຊີ້ບອກທີ່ສະພາແຫ່ງຊາດໄດ້ຮັບຮອງ ລວມທັງຄາດໝາຍ SDG ໃນປີ 2030 ດ້ວຍການປະສານສົມ ທົບກັບບັນດາຂະແໜງການທີ່ກ່ຽວຂ້ອງທັງ ສູນກາງ ແລະ ທ້ອງຖິ່ນ, ບັນດາປະເທດເພື່ອນມິດ, ຄູ່ຮ່ວມພັດທະນາ ແລະ ບັນດາອົງການຈັດຕັ້ງສາກົນຕ່າງໆ ເພື່ອລະດົມທຶນ, ເຕັກນິກວິຊາການ ເຂົ້າໃນການຈັດຕັ້ງປະຕິບັດວຽກບູລິມະສິດຂອງຂະແໜງການສາທາລະນະສຸກ;<br>❑ ໄດ້ສ້າງກົດໝາຍສາທາລະນະສຸກຂຶ້ນໃໝ່, ປັບປຸງກົດໝາຍວ່າດ້ວຍການປະກັນສຸຂະພາບ;<br>❑ ໄດ້ມີການຄົ້ນຄ້ວາ ກ່ຽວກັບພາສີສຸຂະພາບຮ່ວມຄະນະກຳມະການ ເພື່ອນຳໃຊ້ລາຍຮັບຈາກກອງທຶນຄວບຄຸມຢາສູບເຂົ້າໃນງົບປະມານຂະແໜງສາທາລະນະສຸກ. |

UNITED NATIONS
LAO PDR

# 2. ຄວາມຄືບໃນການຜັນຂະຫຍາຍຜົນກອງປະຊຸມໂຕະມົນ ປະຈຳປີ 2024 (ຕໍ່)

| ວຽກງານກະສິກຳ |
|---|
| ❑ ກຳນົດມາດຕະການລວມ ໃນການການສົ່ງເສີມການຜະລິດກະສິກຳ ເພື່ອຄໍ້າປະກັນສະບຽງອາຫານ ແລະການຜະລິດເປັນສິນຄ້າ ໂດຍແນໃສ່ປະລິມານ ແລະຄຸນນະພາບ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການ ໃນການຊົມໃຊ້ຂອງຕະຫຼາດພາຍໃນ ແລະພາຍນອກເປັນສິນຄ້າ;<br>❑ ເອົາໃຈໃສ່ເພີ່ມທະວີສ້າງຄວາມອາດສາມາດ ໃຫ້ແກ່ພະນັກງານລັດຖະກອນ ໃນຂົງເຂດກະສິກຳ ໃນການນຳພາດ້ານວິຊາການປູກຝັງ-ລ້ຽງສັດ, ຊາວກະສິກອນ ແລະສົ່ງເສີມການເຂົ້າເຖິງພື້ນຖານໂຄງລ່າງສາທາລະນະ ແລະຊັບພະຍາກອນທຳມະຊາດ ເພື່ອຮັບປະກັນຊີວິດການເປັນຢູ່ຂອງປະຊາຊົນ. |
| **ວຽກງານກວດກາ ແລະຄວບຄຸມຢາເສບຕິດ** |
| ❑ ສຸມໃສ່ການປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ, ປະຕິບັດກົດໝາຍ ແລະນິຕິກຳ ໃນການຄຸ້ມຄອງເສດຖະກິດ-ສັງຄົມ ໄປຄຽງຄູ່ກັບ ຄວາມພະຍາຍາມແກ້ໄຂປະກົດການຫຍໍ້ທໍ້ຕ່າງໆ ທີ່ເກີດຂຶ້ນໃນສັງຄົມໃຫ້ຫຼຸດລົງ. |
| **ວຽກງານການປົກຄອງທີ່ດີ** |
| ❑ ສົ່ງເສີມການນຳໃຊ້ຂັ້ນຕອນການບໍລິການພື້ນຖານ ກ່ຽວກັບການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ;<br>❑ ສ້າງຄູ່ມືກ່ຽວກັບການສື່ສານໂຄສະນາ ແລະບົດແນະນຳ ກ່ຽວກັບການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ;<br>❑ ປັບປຸງສະພາບແວດລ້ອມ ໃນການເຂົ້າເຖິງຂອງປະຊາຊົນ ເຊັ່ນ: ການຫຼຸດເວລາສະເລ່ຍໃນການລົງທະບຽນ;<br>❑ ຮັບຮອງເອົາການປັບປຸງຂອບການຄຸ້ມຄອງ CSO ເປັນໜຶ່ງໃນບຸລິມະສິດຂອງຂະແໜງການປົກຄອງ. |

UNITED NATIONS
LAO PDR

# 2. ຄວາມຄືບໜ້າໃນການຜັນຂະຫຍາຍຜົນກອງປະຊຸມໂຕະມົນ ປະຈຳປີ 2024 (ຕໍ່)

**ວຽກງານຊັບພະຍາກອນທຳມະຊາດ ແລະສິ່ງແວດລ້ອມ**

- ປະຕິບັດກົນໄກການອອກໃບຢັ້ງຢືນ ກ່ຽວກັບສິ່ງແວດລ້ອມ ໃຫ້ກະທັດຫັດ ເພື່ອຫຼຸດຂັ້ນຕອນ ແລະ ໄລຍະເວລາ ໃນການພິຈາລະນາ ການປະເມີນຜົນກະທົບສິ່ງແວດລ້ອມຂອງໂຄງການລົງທຶນ.
- ໄດ້ຊຸກຍູ້ຜູ້ພັດທະນາໂຄງການໃຫ້ເຂັ້ມງວດໃນການປະຕິບັດພັນທະດ້ານສງແວດລ້ອມ ແລະ ສັງຄົມ ຕາມເງື່ອນໄຂທີ່ກຳນົດໄວ້ໃນໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ, ແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ດ້ວຍຮູບການອອກໜັງສືແຈ້ງການ, ແຈ້ງທວງ ແລະ ຈັດກອງປະຊຸມ;
- ໄດ້ສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງປະຕິບດວຽກງານການຄຸ້ມຄອງທີ່ດິນ ແລະຜັນຂະຫຍາຍກົດໝາຍ ວ່າດ້ວຍທີ່ດິນ ໂດຍການສ້າງ ແລະປັບປຸງນິຕິກຳໃຕ້ກົດໝາຍ;

**ວຽກງານການພັດທະນາສີມືແຮງງານ ແລະການສ້າງວຽກເຮັດງານທຳ**

- ລະດົມຂົນຂວາຍການສະໜັບສະໜູນທຶນການສຶກສາວິຊາຊີບ ເພື່ອຍົກລະດັບຂີດຄວາມສາມາດ ດ້ານຊັບພະຍາກອນມະນຸດ;
- ສ້າງສະພາບແວດລ້ອມທີ່ເອື້ອອຳນວຍ ໃນການເຂົ້າເຖິງການມີວຽກເຮັດງານທຳ ໂດຍການຂະຫຍາຍຈຸດບໍລິການຈັດຫາງານ ຂັ້ນເມືອງ ແລະແຂວງ;
- ສົ່ງເສີມທຸກຫົວໜ່ວຍທຸລະກິດ ທັງພາກລັດ, ວິສະຫະກິດ, ເຂດເສດຖະກິດພິເສດ ແລະ ໂຄງການລົງທຶນຕ່າງໆ ໃນການຈັດຫາວຽກເຮັດງານທຳໃຫ້ເຂົ້າສູ່ຕະຫຼາດແຮງງານ ພາຍໃນ ແລະຕ່າງປະເທດ ໂດຍຕິດພັນກັບວາລະແຫ່ງຊາດ;
- ໄດ້ພັດທະນາສີມືແຮງງານ ຕິດພັນກັບວາລະແຫ່ງຊາດ ໃຫ້ຜູ້ບໍ່ມີອາຊີບ, ຜູ້ຕ້ອງການປ່ຽນອາຊີບ, ຜູ້ວ່າງງານ ແລະ ຜູ້ອອກແຮງງານ ທີ່ຈະເຂົ້າສູ່ຕຳແໜ່ງໃໝ່ ພ້ອມທັງເຮັດການທົດສອບສີມືແຮງງານຕາມມາດຕະຖານສີມືແຮງງານແຫ່ງຊາດ ແລະ ຊຸກຍູ້ຫົວຫົວໜ່ວຍແຮງງານເຮັດການທົດສອບສາຂາອາຊີບຕ່າງໆແຮງງານທີ່ຈະເຂົ້າສູ່ຕຳແໜ່ງງານໃໝ່.

# ຂອບໃຈ